ສະຫາຍ ທຸມພັນ ລັດຕະນະວົງ ທີ່ນັບຖື



ໃນໂອກາດທີ່ສະຫາຍ ຕາງໜ້າກະຊວງວັດທະນະທຳ ລົງໄປຮ່ວມກອງປະຊຸມ ວັດທະນະທຳ ແຂວງສະຫວັນນະເຂດສົກປີ 1985 ນັ້ນ ສະຫາຍໄດ້ແນະນຳໃຫ້ເຮົາຊອກເອົາຄວາມໂອ່ນຊາ ຈາກນັ້ນມາເຮົາກໍພະຍາຍາມຊອກແຕ່ບໍ່ໄດ້ຫລາຍແບບ ມາຮອດເດືອນ ມິຖຸນາ ປີ 1987 ນີ້ເອງ ເຮົາໄດ້ໄປເກັບກຳສະຖິຕິໜັງສືຜູກໃບລານຢູ່ວັດບ້ານໜອງລຳຈັນ ຈຶ່ງມີໂອກາດຊອກເອົາຄວາມໂອ່ນຊາ ນຳເຖົ້າແກ່ຢູ່ບ້ານດັ່ງກ່າວໄດ້ຫລາຍແບບ ແລະ ຍັງໄດ້ຄວາມຮ່ອງນາງ ຄວາມເຝິກຄວາຍອີກດ້ວຍ. ດັ່ງນັ້ນ ເຮົາຈຶ່ງໄດ້ສົ່ງມາໃຫ້ສະຫາຍ.

## ຄວາມໂອ່ນຊາ.

( ໄດ້ຈາກເຖົ້າແກ່ ບ້ານໜອງລຳຈັນ ຕາແສງ ໜອງລຳຈັນ ເມືອງ ຈຳພອນ ແຂວງ ສະຫວັນນະເຂດ ).

ຄົ້ນຄວ້າ ແລະ ບັນທຶກ ໂດຍ ບຸນເສີມ ກາຍະວົງ.

ຄວາມໂອ່ນຊາ ເປັນຄວາມຫລິ້ນມ່ວນຊື່ນປະເພດໜຶ່ງຂອງເດັກນ້ອຍສະໄໝກ່ອນ. ເວົ້າສະເພາະຊາຫລືຊາແມ່ນມີຫລາຍແບບຄື:

1. ແບບເອົາແປ້ນເຮັດບ່ອນນັ່ງ ເອົາເຊືອກ 2 ຫລື 3 ເສັ້ນຜູກ 2 ສົ້ນແປ້ນ ແລະທາງກາງເພື່ອໃຫ້ແປ້ນນອນ ແລ້ວຜູກແຂວນໃສ່ງ່າໄມ້ ຫລືຂາງເຮືອນເອີ້ນວ່າ "ຊາແປ້ນກີ່" ແບບນີ້ໄດ້ເຫືອ

ລະ 2-4 ຄົນ.

2. ແບບເອົາໄມ້ປ່ອງປ້ອງໜຶ່ງເຈາະບ່ອນນັ່ງເອົາ ເຊືອກແຍ່ເຂົ້າຮູກະບອງນັ້ນຊອດອອກ ເອົາ 2 ສົ້ນເຊືອກຜູກແຂວນຄືແບບທີ່ໜຶ່ງ ເອີ້ນວ່າ " ຊາໂປ້ງເປ້ງ " ແບບນີ້ນັ່ງໄດ້ເທື່ອລະ 1 ຄົນ.

3. ແບບເອົາເຊືອກເສັ້ນດຽວຜູກແຂວນຄືແບບກ່ອນ ແຕ່ສົ້ນເຊືອກເບື້ອງລຸ່ມຜູກໃສ່ທາງກາງໄມ້ກົ້ນງ່າວສອກໜຶ່ງ ໃຫ້ຍື່ນດ້ານມົດທັງສອງດ້ານພໍເພື່ອເປັນບ່ອນນັ່ງເອີ້ນວ່າ"ຊາເຊືອກ" ແບບນີ້ ກໍນັ່ງໄດ້ເທື່ອລະ 1 ຄົນ ເພາະຕ້ອງນັ່ງເອົາສອງຂາຄາບເຊືອກ.

4. ແບບເອົາເຄືອແນວໜຶ່ງທີ່ຫ້ອຍລົງຈາກປາຍໄມ້ແລ້ວຕັດສົ້ນທາງລຸ່ມໃຫ້ຫົວດິນ ເອົາສອງມືຈັບເຄືອໄວ້ແໜ້ນໆ ຍົກແຂ້ງຂາຂຶ້ນແລ້ວໂຍ່ນເລີຍເອີ້ນວ່າ"ຊາຕົກກຸ່ມ" ແບບນີ້ມັກໃຊ້ຢູ່ ຕາມປ່າໃນສະຖານທີ່ລ້ຽງງົວລ້ຽງຄວາຍເພາະອາໄສເຄືອແລະຕົ້ນໄມ້. ແຕ່ໃນບາງບ່ອນມີຕົ້ນໄມ້ໃຫຍ່ງ່າຕ່າງ ຈຶ່ງກວ້າງຂວາງທາງລຸ່ມສະອາດເປົ່າແປນ ເໝາະແກ່ການພັກຜ່ອນຢ່ອນອາລົມ ແຕ່ບໍ່ມີເຄືອຍ້ອຍລົງມາກໍມັກໄປຫາເອົາເຄືອຢູ່ບ່ອນອື່ນມາຜູກໃສ່ງ່າໄມ້ດັ່ງກ່າວເພື່ອເຮັດໂຍ່ນຊາໃນທີ່ນັ້ນ.

ເວລາໂຍ່ນຈະເປັນຊາແບບໃດກໍ່ຕາມ ຖ້າມີຫລາຍຄົນແມ່ນ ພັດປ່ຽນກັນໂຍ່ນ ຜູ້ໂຍ່ນທຸກຄົນຕ້ອງເວົ້າຄວາມໂຍ່ນຊາໄປພ້ອມ ເພື່ອສະແດງເຖິງຄວາມມ່ວນຊື່ນ ທັງເປັນການກຳນົດເວລາ ຄືເວົ້າ ສຸດ

ຕາມຄາດໝາຍກັນແລ້ວກໍ່ໂດນແຈັດອອກໄປໃຫ້ຜູ້ໃໝ່ຂຶ້ນຕໍ່ ເອົາຄື້ງ
ນ້ຳໝົດສູ້ຕົນແລ້ວຕັ້ງຕົ້ນຮອບໃໝ່ໄປເລື້ອຍໆ. ການເວົ້າຈະເວົ້າ
ຜູ້ລະຈັກຫລິ້ນຈັ່ງລິງ ຈະເອົາແບບໃດກັບແບບໃດແດ່ມາເວົ້ານັ້ນ ກໍ່
ແລ້ວແຕ່ການຕົກລົງກັນ ແລະ ຈະເປັນຊາແບບໃດກໍ່ຕາມປາກ ເອົາ
ຄວາມເວົ້າແບບໃດມາເວົ້າກໍ່ໄດ້ ເພາະຄວາມໂອ່ນຊາ ກໍ່ມີຫລາຍ
ແບບດັ່ງຕໍ່ໄປນີ້ :



**ທົ່ງນ້ອຍ ບ້ານ ຕົ່ງຫວາຍ ແຂວງ ສະຫວັນນະເຂດ ປີ 1992**

| | |
|---|---|
| 1. ໂອ່ນອີ່ຈາ | ອີ່ຕາແປ້ນກີ |
| ເດືອນສິບສີ່ | ເຂົ້າແທ່ດອກທອງ |
| ເດືອນສິບສອງ | ເຂົ້າແທ່ດອກງິ້ວ |
| ລົມຮ້ວງ ດອກງິ້ວແຮ່ງບານ | ດອກຈານແຮ່ງເຮືອ |
| ດອກເດືອຕ້ງ | ກາງບ້ານເທີເລີ |
| ເທີເລີສັງ | ເທີເລີຜັງແຜດ |
| ໄກ່ຜູ້ແສດ | ເດືອເງິນເດືອດຳ |
| ໄກ່ຜູ້ດຳ | ຫາກິນລຽບຮ່ອງ |
| ເຈາະປ້ອງຢ້ຽມ | ສ່ອງອອກກາງນາ |
| ນົກສັງກາ | ວ່າແຂກມາແລ້ວ |
| ກາຖືກແຮ້ວ | ແຫລວຖືກຕັງບານ |
| ໜູກວາງຟານ | ອອກໄປຫລິ້ນໂຄກ |
| ຢູ່ຕາມໂສກ | ກະຕ່າຍນອນເມືອຍ. |
| 2. ມາເຮົາມາ | ໂອ່ນຈາແປ້ນກີ |
| ຍາມເດືອນ 4 | ໄປເກັບດອກຈານ |
| ເກັບຜັກຫວານ | ຢູ່ໂຄກເທີ້ເລີ້ |
| ເກັບໝາກເວີ | ຢູ່ຫົວດົງຍາວ |
| ສົ້ມປາຂາວ | ຕຸ່ງສົ້ມປາດໍ່ |
| ໄມ້ໝາກກໍ່ | ຕາງໄມໝາກແງວ |
| ແຫລວໂຕຫລວງ | ລົງຖືກກະຕ້ຳ |
| ຕາເຂົ້າກ້ຳ | ມາໄວ້ໃສ່ນາ |
| ຕາປີກກາ | ມາໄວ້ວີເຂົ້າ |

ໝາກນ້ຳເຕົ້າ　　ມາໄວ້ເຮັດກອງ
ຂຶ້ນເຄືອງຂອງ　　ໃສ່ເຮືອຊາວຄ້າ
ເກັບໝາກບ້າ　　ໃສ່ປາຊຸມຊຸມ
ຊຸມໃຜນັບ　　ຜັກບົ້ວຜັກກາດ
ນ້ຳໂຕນຕາດ　　ຫາດງໄຫລກາຍ
ບາຍໝາກພິກ　　ໄປຢິກຂຶ້ນຕາ
ຍອດສີດາ　　ພໍເປັນແກ່ແດ່
ແຍ້ດັງແບ້　　ມັນຈັກໄລ່ຊຸນ
ແຍ້ດັງຄືນ　　ມັນຈັກໄລ່ປ້ຳ
ຊ້າງລົງນ້ຳ　　ເມືອຍານແລງ
ຝູງແມງແຄງ　　ພາກັນເປົ່າປີ
ຝູງແມງໝີ　　ພາກັນຕີບມີ
ແມງຍ້ງກີ　　ໄປກອດປາຍງ້າວ
ຕົ້ນໝາກພ້າວ　　ເກີດຢູ່ທົ່ວຂົວ
ຈົວຕີໂປງ　　ໂມ່ງໂຫມະໂມ່ງໂມ່ຍ.

3. ໂອ່ນອີຊາ　　ອີຕາໂຕ່ງເຕ່ງ
ໄມ້ໂປ້ງເປ້ງ　　ເອົາເຮັດໄມ້ຄານ
ຫາບເຂົ້າສານ　　ຊາກັບໝາກມົ້
ຫອຍກາບກົ້　　ໄປຂີ່ຄກາ
ເມືອງລັງກາ　　ຂີ່ມ້າໄປສົ່ງ
ແລ່ນຂ້າມທົ່ງ　　ໄປໃສ່ດົ່ງດອນ
ໜ້າຊະອອນ　　ຝູງໝູ່ລຳໄມ້